ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

******************

ແຂວງບໍລິຄຳໄຊ

235 ເລກທີ............../ຂບຊ

28 MAR 2018

ບໍລິຄຳໄຊ, ວັນທີ....................

# ຂໍ້ຕົກລົງ

## ຂອງເຈົ້າແຂວງ ບໍລິຄຳໄຊ

## ວ່າດ້ວຍ ການກຳນົດເກັບຄ່າຊັບພະຍາກອນປ່າໄມ້, ຄ່າພັນທະປູກໄມ້ທົດແທນຄືນ ແລະ ຄ່າຄຸ້ມຄອງ ປະເພດເຄື່ອງປ່າຂອງດົງ

- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012.
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007.
- ອີງຕາມ ລັດຖະບັນຍັດ ຂອງປະທານປະເທດ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ.
- ອີງຕາມ ລັດຖະບັນຍັດ ຂອງປະທານປະເທດ ສະບັບເລກທີ 001/ປປທ, ລົງວັນທີ 15 ທັນວາ 2015 ວ່າດ້ວຍ ອັດຕາຄ່າຊັບພະຍາກອນທຳມະຊາດ.
- ອີງຕາມ ມະຕິຕົກລົງຂອງກອງປະຊຸມສະພາປະຊົນແຂວງສະໄໝສາມັນເທື່ອທີ 3 ເລກທີ 103/ສພຂ.ບຊ, ລົງວັນທີ 24 ກໍລະກົດ 2017, ວ່າດ້ວຍການຮັບຮອງແຜນການສ້າງ ແລະ ປັບປຸງນິກຳ ໄລຍະ 2017 ຫາ 2020.
- ອີງຕາມ ມະຕິກອງປະຊຸມສະໄໝສາມັນເທື່ອ 4 ຂອງສະພາປະຊາຊົນແຂວງຊຸດທີ I ຄັ້ງວັນທີ 25 ມັງກອນ 2018.

## ເຈົ້າແຂວງບໍລິຄຳໄຊ ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບການກຳນົດເກັບຄ່າຊັບພະຍາກອນປ່າໄມ້, ຄ່າພັນທະປູກໄມ້ທົດແທນຄືນ, ຄ່າຄຸ້ມຄອງ ປະເພດເຄື່ອງປ່າຂອງດົງ ໃຫ້ໄດ້ຮັບຜົນປະໂຫຍດສູງສຸດ ເພື່ອເຮັດໃຫ້ຊັບພະຍາກອນປ່າໄມ້ ປະເພດເຄື່ອງປ່າຂອງດົງ ມີຄວາມອຸດົມສົມບູນ ແລະ

ຊົມໃຊ້ໂດຍບໍ່ບົກແຫ້ງ, ມີຄວາມຍືນຍົງ, ຮັບປະກັນຄວາມເປັນເອກະພາບ, ມີປະສິດທິຜົນ ໃນການເກັບຄ່າຊັບພະຍາກອນປ່າໄມ້ ປະເພດເຄື່ອງປ່າຂອງດົງ ຢູ່ໃນເຂດແຂວງບໍລິຄຳໄຊ ແນໃສ່ສ້າງລາຍຮັບໃຫ້ແກ່ງົບປະມານຂອງແຂວງ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງໃຫ້ມີຄວາມເຂັ້ມແຂງ.

ມາດຕາ 2. ການເກັບຄ່າຊັບພະຍາກອນປ່າໄມ້,ຄ່າພັນທະປູກໄມ້ທົດແທນຄືນ ແລະ ຄ່າຄຸ້ມຄອງ ປະເພດເຄື່ອງປ່າຂອງດົງ

ຄ່າຊັບພະຍາກອນປ່າໄມ້, ຄ່າພັນທະປູກໄມ້ທົດແທນຄືນ ແລະ ຄ່າຄຸ້ມຄອງ ປະເພດເຄື່ອງປ່າຂອງດົງ ແມ່ນການເກັບຄ່າພັນທະດ້ານການເງິນທີ່ບຸກຄົນ, ນິຕິບຸກຄົນ, ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດ ແລະ ມີລາຍຮັບຈາກການດຳເນີນທຸລະກິດ ກ່ຽວກັບຊັບພະຍາກອນປ່າໄມ້ ປະເພດເຄື່ອງປ່າຂອງດົງຊຶ່ງຕ້ອງໄດ້ເສຍພັນທະໃຫ້ລັດ ຕາມອັດຕາທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

ມາດຕາ 3. ການອະທິບາຍຄຳສັບ

**ບັນດາຄຳສັບທີ່ໄດ້ກຳນົດໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້ :**

1. **ປະເພດເຄື່ອງປ່າຂອງດົງ**: ໝາຍເຖິງ ພືດພັນປະເພດຕ່າງໆ ທີ່ເກີດຂຶ້ນຢູ່ຕາມປ່າໄມ້ ທີ່ຂະຫຍາຍພັນໂດຍທຳມະຊາດເປັນຕົ້ນຕໍ ແຕ່ລະຊະນິດເຄື່ອງປ່າຂອງດົງ ຈະເປັນ ຕົ້ນ, ລຳ, ເຄືອ, ຫົວ, ຮາກ, ຍອດ, ໜໍ່, ໃບ, ດອກ, ໝາກ, ເມັດ ຫຼື ແກ່ນ, ເປືອກ, ນ້ຳມັນ, ຢາງໄມ້, ເຫັດ, ນ້ຳເຜິ້ງ, ພືດທີ່ເປັນຢາ ແລະ ອື່ນໆ;

2. **ຄ່າຊັບພະຍາກອນປະເພດເຄື່ອງປ່າຂອງດົງ**: ໝາຍເຖິງ ພັນທະດ້ານການເງິນ ຊຶ່ງບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ກ່ຽວກັບປະເພດເຄື່ອງປ່າຂອງດົງຊຶ່ງຕ້ອງເສຍຄ່າຊັບພະຍາກອນປ່າໄມ້ຕາມອັດຕາທີ່ໄດ້ກຳນົດໄວ້ ໃນໝວດທີ 2, ມາດຕາ 8 ແລະ ມາດຕາ 9 ຂອງຂໍ້ຕົກລົງສະບັບນີ້ ແລະ ລາຍຮັບທີ່ໄດ້ຈາກການເກັບຄ່າຊັບພະຍາກອນປ່າໄມ້ປະເພດເຄື່ອງປ່າຂອງດົງ ຕ້ອງໄດ້ຖອກເຂົ້າງົບປະມານຂອງລັດ ຕາມທີ່ໄດ້ກຳນົດໄວ້ ໃນລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 001/ປປທ, ລົງວັນທີ 15 ທັນວາ 2015;

3. **ຄ່າພັນທະປູກໄມ້ ແລະ ຄ່າຄຸ້ມຄອງປະເພດເຄື່ອງປ່າຂອງດົງ**: ໝາຍເຖິງ ພັນທະ ດ້ານການເງິນຊຶ່ງບຸກຄົນ, ນິຕິບຸກຄົນ, ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດດຳເນີນທຸລະກິດກ່ຽວກັບປະເພດເຄື່ອງປ່າຂອງດົງຊຶ່ງຕ້ອງເສຍຄ່າພັນທະປູກໄມ້ ແລະ ຄ່າຄຸ້ມຄອງ ຕາມອັດຕາທີ່ໄດ້ກຳນົດໄວ້ໃນໝວດທີ 2, ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ແລະ ຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດປະທານປະເທດ ສະບັບເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ແລະ ດຳລັດ ຂອງນາຍົກລັດຖະມົນຕີສະບັບເລກທີ 38/ນຍ, ລົງວັນທີ 21 ກຸມພາ 2005;

4. **ເຂດພື້ນທີ່ປ່າໄມ້ທີ່ໄດ້ຈັດສັນປະເພດເຄື່ອງປ່າຂອງດົງ**: ໝາຍເຖິງ ປ່າໄມ້ ແລະ ທີ່ດິນປ່າໄມ້ເຊິ່ງຖືກຈັດແບ່ງ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ເຮັດໃຫ້ການນຳໃຊ້ຜະລິດຕະພັນປ່າໄມ້ ປະເພດເຄື່ອງປ່າຂອງດົງ ໄປຕາມລະບົບທີ່ໄດ້ຈັດສັນໄວ້ ໃຫ້ມີຄວາມຍືນຍົງ;

5. **ເຂດພັດທະນາພື້ນຖານໂຄງລ່າງ ທີ່ມີປະເພດເຄື່ອງປ່າຂອງດົງ**: ໝາຍເຖິງ ພື້ນທີ່ ທີ່ລັດຖະບານໄດ້ອະນຸມັດເປັນທາງການ ໃຫ້ບຸກເບີກກໍ່ສ້າງເສັ້ນທາງໃໝ່, ເຂດກໍ່ສ້າງເຂື່ອນໄຟຟ້າ, ເຂດນ້ຳຈະຖ້ວມ, ເຂດ

ຂຸດຄົ້ນແຮ່ທາດ ແລະ ອື່ນໆ ເຊິ່ງເຂດດັ່ງກ່າວໄດ້ກວມເອົາພື້ນທີ່ປ່າໄມ້ ແລະ ມີປະເພດເຄື່ອງປ່າຂອງດົງ ຕ້ອງໄດ້ເກັບກູ້ອອກມານຳໃຊ້ໃຫ້ລັດໄດ້ຮັບຜົນປະໂຫຍດສູງສຸດ;

6. **ການດຳເນີນທຸລະກິດ ປະເພດເຄື່ອງປ່າຂອງດົງ**: ໝາຍເຖິງ ບຸກຄົນ, ນິຕິບຸກຄົນ, ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດ ແລະ ຄຸ້ມຄອງຕິດຕາມກວດກາຈາກພາກສ່ວນກ່ຽວຂ້ອງເຊັ່ນ : ພະແນກກະສິກຳ ແລະ ປ່າໄມ້, ພະແນກອຸດສາຫະກຳການຄ້າ, ພະແນກການເງິນ, ພະແນກສາທາລະນະສຸກ (ສຳລັບພືດທີ່ເປັນຢາ) ແລະ ອົງການປົກຄອງເມືອງ ໃຫ້ເຄື່ອນໄຫວດ້ານກິດຈະການ ຂຸດຄົ້ນ, ເກັບຊື້ ແລະ ປຸງແຕ່ງ ປະເພດເຄື່ອງປ່າຂອງດົງ ເຊິ່ງການເຄື່ອນໄຫວດຳເນີນທຸລະກິດດັ່ງກ່າວ ຕ້ອງໄດ້ເສຍຄ່າຊັບພະຍາກອນ, ຄ່າພັນທະປູກໄມ້ທົດແທນຄືນ ແລະ ຄ່າຄຸ້ມຄອງປະເພດເຄື່ອງປ່າຂອງດົງ ຕາມທີ່ໄດ້ກຳນົດໄວ້ ໃນຂໍ້ຕົກລົງສະບັບນີ້;

7. **ການນຳໃຊ້ປະເພດເຄື່ອງປ່າຂອງດົງແບບຄອບຄົວ**: ໝາຍເຖິງການເກັບກູ້ ແລະ ນຳໃຊ້ປະເພດເຄື່ອງປ່າຂອງດົງ ໂດຍປະຊາຊົນຕາມປະເພນີ ເພື່ອນຳໃຊ້ເຂົ້າໃນການດຳລົງຊີວິດປະຈຳວັນ ແລະ ຜະລິດເປັນເຄື່ອງຫັດຖະກຳແບບຄອບຄົວ.

**ມາດຕາ 4. ນະໂຍບາຍຂອງລັດກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ປະເພດເຄື່ອງປ່າຂອງດົງ**

**ນະໂຍບາຍຂອງລັດ ກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ປະເພດເຄື່ອງປ່າຂອງດົງ ມີດັ່ງນີ້ :**

ລັດຊຸກຍູ້ສົ່ງເສີມ ບຸກຄົນ, ນິຕິບຸກຄົນ, ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ, ສ້າງສະພາບແວດລ້ອມ ແລະ ເງື່ອນໄຂເອື້ອອຳນວຍຄວາມສະດວກໃນດ້ານຕ່າງໆ ໃຫ້ແກ່ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດທີ່ດຳເນີນທຸລະກິດ ກ່ຽວກັບການເຮັດທຸລະກິດປະເພດເຄື່ອງປ່າຂອງດົງໄດ້ຢູ່ ສປປ ລາວຢ່າງສະດວກ, ຖືກຕ້ອງຕາມລະບຽບກົດໝາຍ;

ລັດອຳນວຍຄວາມສະດວກການອອກເອກະສານອະນຸຍາດດຳເນີນທຸລະກິດປະເພດເຄື່ອງປ່າຂອງດົງຢູ່ ສປປລາວໃຫ້ມີຄວາມສະດວກ, ວ່ອງໄວ ແລະ ຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 5. ຫຼັກການພື້ນຖານກ່ຽວກັບການເກັບຄ່າຊັບພະຍາກອນທຳມະຊາດປະເພດເຄື່ອງປ່າຂອງດົງ.**

**ການເກັບຄ່າຊັບພະຍາກອນ ຕ້ອງປະຕິບັດຕາມຫຼັກການພື້ນຖານ ມີດັ່ງນີ້ :**

1. ສອດຄ່ອງກັບແນວທາງຂອງພັກ, ນະໂຍບາຍຂອງລັດ, ກົດໝາຍ, ລັດຖະບັນຍັດ, ມະຕິ, ຄຳສັ່ງ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 4 ຂອງແຂວງ;
2. ສອດຄ່ອງກັບແຜນພັດທະນາ 5 ປີ ຂອງກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງ ການເງິນ;
3. ຮັບປະກັນຄວາມເປັນເອກະພາບ, ຄວາມໂປ່ງໃສ ໃນການຈັດເກັບຄ່າຊັບພະຍາກອນ ອັດຕາດຽວກັນ ທົ່ວແຂວງ;
4. ຮັບປະກັນຄວາມສະເໝີພາບ, ໂປ່ງໃສ, ເປີດເຜີຍ ແລະ ຍຸຕິທຳ ສາມາດກວດສອບໄດ້.

**ມາດຕາ 6. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ໄດ້ນຳໃຊ້ສະເພາະການກຳນົດ ເກັບຄ່າຊັບພະຍາກອນປ່າໄມ້,ຄ່າພັນທະປູກໄມ້ທົດແທນຄືນ ແລະ ຄ່າຄຸ້ມຄອງ ປະເພດເຄື່ອງປ່າຂອງດົງຈາກບຸກຄົນ, ນິຕິບຸກຄົນ, ຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຮັບອະນຸຍາດເຄື່ອນໄຫວດຳເນີນທຸລະກິດ ປະເພດເຄື່ອງປ່າຂອງດົງຢູ່ພາຍໃນແຂວງບໍລິຄຳໄຊ.

ສຳລັບປະເພດເຄື່ອງປ່າຂອງດົງ ທີ່ປະຊາຊົນນຳໃຊ້ແບບຄອບຄົວ ແມ່ນບໍ່ໄດ້ກຳນົດຢູ່ໃນຂໍ້ຕົກລົງສະບັບນີ້.

## ໝວດທີ 2

## ການກຳນົດເກັບຄ່າຊົບພະຍາກອນປ່າໄມ້, ຄ່າພັນທະປູກໄມ້ທົດແທນຄືນ ແລະ ຄ່າຄຸ້ມຄອງ ປະເພດເຄື່ອງປ່າຂອງດົງ

**ມາດຕາ 7.** ການກຳນົດ ເກັບຄ່າຊົບພະຍາກອນປ່າໄມ້, ຄ່າພັນທະປູກໄມ້ທົດແທນຄືນ ແລະ ຄ່າຄຸ້ມຄອງປະເພດເຄື່ອງປ່າຂອງດົງ.

ການກຳນົດ ເກັບຄ່າຊົບພະຍາກອນປ່າໄມ້, ຄ່າພັນທະປູກໄມ້ທົດແທນຄືນ ແລະ ຄ່າຄຸ້ມຄອງປະເພດເຄື່ອງປ່າຂອງດົງມີ 2 ປະເພດຄື :

1. ການກຳນົດຫົວໜ່ວຍວັດແທກ ແລະ ຄິດຊັ່ງ ປະເພດເຄື່ອງປ່າຂອງດົງ;
2. ການກຳນົດອັດຕາຄ່າຊົບພະຍາກອນປ່າໄມ້, ຄ່າພັນທະປູກໄມ້ທົດແທນຄືນ ແລະ ຄ່າຄຸ້ມຄອງປະເພດເຄື່ອງປ່າຂອງດົງ.

**ມາດຕາ 8.** ການກຳນົດຫົວໜ່ວຍວັດແທກ ແລະ ຄິດຊັ່ງ ປະເພດເຄື່ອງປ່າຂອງດົງ

ການກຳນົດຫົວໜ່ວຍວັດແທກ ແລະ ຄິດຊັ່ງ ປະເພດເຄື່ອງປ່າຂອງດົງມີດັ່ງນີ້ :

- ໄມ້ຕື້ອ, ໄມ້ຟືນ ເພື່ອຜະລິດເປັນຖ່ານຂາວ, ຖ່ານດຳ ແລະ ເປັນເຊື້ອເພີງ ຂະໜາດໜ້າຕ້າງ 19 ຊັງຕີແມັດລົງມາ, ຫົວໜ່ວຍແມ່ນ: ເປັນແມັດກ້ອນ (ມ$^3$);
- ໄມ້ຫຼັກຮົ້ວ ຂະໜາດໜ້າຕ້າງ ບໍ່ເກີນ 15 ຊັງຕີແມັດ, ຄວາມຍາວບໍ່ເກີນ 2,50 ແມັດ, ໄມ້ຄ້ຳແບບຂະໜາດໜ້າຕ້າງບໍ່ເກີນ 12 ຊັງຕີແມັດ, ຂະໜາດຄວາມຍາວບໍ່ເກີນ 4,50 ແມັດ ແລະໄມ້ປ່ອງ, ຫົວໜ່ວຍ ແມ່ນ: (ລຳ);
- ຫວາຍທູນ, ຫວາຍນ້ອຍ ຂະໜາດຄວາມຍາວແຕ່ 5 ຫາ 6 ແມັດ, ຫົວໜ່ວຍ ແມ່ນ: (ເສັ້ນ);
- ເຄື່ອງປ່າຂອງດົງທີ່ໃຫ້ຜົນຜະລິດເປັນ: ຫົວ, ຮາກ, ເຄືອ, ເປືອກ, ດອກ, ໝາກ, ແກ່ນ, ນ້ຳມັນ, ໃບ, ຍອດ, ສິ້ນສ່ວນໄມ້ເກດສະໜາ, ໄມ້ຫອມ ແລະ ອື່ນໆ, ຫົວໜ່ວຍ ແມ່ນ: (ກິໂລ);
- ສຳລັບການວັດແທກ, ຄິດຊັ່ງ ຕົວຈິງແມ່ນ ໃຫ້ປະຕິບັດຕາມລະບຽບການຂອງພະແນກການທີ່ກ່ຽວຂ້ອງ ກຳນົດໄວ້ໃນແຕ່ລະໄລຍະ.

**ມາດຕາ 9.** ການກຳນົດຄ່າຊົບພະຍາກອນປ່າໄມ້, ຄ່າພັນທະປູກໄມ້ທົດແທນຄືນ ແລະຄ່າຄຸ້ມຄອງ ປະເພດເຄື່ອງປ່າຂອງດົງ

ການກຳນົດຄ່າຊົບພະຍາກອນປ່າໄມ້, ຄ່າພັນທະປູກໄມ້ທົດແທນຄືນ ແລະ ຄ່າຄຸ້ມຄອງ ປະເພດເຄື່ອງປ່າຂອງດົງມີດັ່ງນີ້ :

| ລ/ດ | ປະເພດ ແລະ ຊະນິດ ເຄື່ອງປ່າຂອງດົງ | ຫົວໜ່ວຍ | ຄ່າຊົບພະຍາກອນປ່າໄມ້ (ກີບ) | ຄ່າພັນທະປູກໄມ້ທົດແທນຄືນ (ກີບ) | ຄ່າຄຸ້ມຄອງເຄື່ອງປ່າຂອງດົງ (ກີບ) |
|---|---|---|---|---|---|
| I | ປະເພດເປັນເສັ້ນ | | | | |
| 1 | ຫວາຍທູນ(ໃຫຍ່) | | | | |
| | - ເຂດພັດທະນາພື້ນຖານໂຄງລ່າງ | ເສັ້ນ | 12.000 | 1.000 | 50 |
| | - ໃນໂຄງການທີ່ໄດ້ຈັດສັນປ່າໄມ້ | ເສັ້ນ | 3.000 | 600 | 50 |

| | | | | | |
|---|---|---|---|---|---|
| 2 | ຫວາຍນ້ອຍ<br>- ເຂດພັດທະນາພື້ນຖານໂຄງລ່າງ<br>- ໃນໂຄງການທີ່ໄດ້ຈັດສັນປ່າໄມ້ | ເສັ້ນ<br>ເສັ້ນ | 800<br>230 | 200<br>65 | 50<br>5 |
| **II** | **ສິ້ນສ່ວນໄມ້** | | | | |
| - | ໄມ້ພືນລວມ | ມ³ | 4.000 | 2.000 | 1.000 |
| - | ໄມ້ຕື້ວ | ມ³ | 7.000 | 2.000 | 1.000 |
| - | ໄມ້ຫຼັກຮົ້ວ | ຫຼັກ | 5.000 | 100 | 10 |
| - | ຖ່ານຂາວສໍາລັບສົ່ງອອກ | ກິໂລ | 1.600 | 20 | 0 |
| - | ຖ່ານດໍາສໍາລັບຮັບໃຊ້ພາຍໃນ | ກິໂລ | 700 | 1 | 0 |
| **III** | **ປະເພດຢາງຂອງຕົ້ນໄມ້** | | | | |
| 1 | ຢາງເກື່ອມ, ດົງຕຸນ ແລະ ອື່ນໆ | ກິໂລ | 100 | 100 | 20 |
| 2 | ນໍ້າມັນຍາງ ແລະ ຢາງແປກ | ກິໂລ | 200 | 200 | 20 |
| 3 | ຍານ, ຂີ້ຊີ, ຄັ່ງ | ກິໂລ | 300 | 100 | 20 |
| **IV** | **ປະເພດເປັນດອກ:** | | | | |
| 1 | ດອກແຂມ ແລະ ດອກອື່ນໆ | ກິໂລ | 200 | 20 | 2 |
| **V** | **ປະເພດໝາກ** | | | | |
| 1 | ໝາກແໜ່ງ | | 6.000 | 20 | 2 |
| 2 | ໝາກຂາໄກ່, ໝາກຫວາຍ,ໝາກ<br>ແສງເບື່ອ, ໝາກເກື້ອມ ແລະ ອື່ນໆ | ກິໂລ | 2.500 | 5 | 1 |
| 3 | ໝາກຕາວ | ກິໂລ | 800 | 15 | 2 |
| **VI** | **ປະເພດເປືອກ** | | | | |
| 1 | ເປືອກແຄ, ເປືອກບົງ | ກິໂລ | 300 | 30 | 3 |
| 2 | ປໍສາ | ກິໂລ | 200 | 50 | 5 |
| **VII** | **ປະເພດຫົວ** | | | | |
| 1 | ມັນອ້ອນລິງ, ປາຫົວ, ຫົວກະບຸກ<br>ແລະ ອື່ນໆ | ກິໂລ | 150 | 100 | 10 |
| 2 | ຫົວສາມສິບ | ກິໂລ | 400 | 100 | 10 |
| **VIII** | **ປະເພດຮາກ** | | | | |
| 1 | ຂີງແດງປາກົ້ງ | ກິໂລ | 400 | 100 | 10 |
| **IX** | **ປະເພດໄມ້ປ່ອງ(ເປັນລໍາ)** | | | | |
| 1 | ໄມ້ພາງ, ໄມ້ເຮັ້ຍ | ລໍາ | 200 | 200 | 100 |
| 2 | ໄມ້ຫົກ | ລໍາ | 400 | 200 | 100 |
| **X** | **ປະເພດເຄືອ** | | | | |
| 1 | ເຄືອແຫມ | ກິໂລ | 2.000 | 100 | 10 |

| | | | | | |
|---|---|---|---|---|---|
| 2 | ເຄືອເຂົາຣ | ກິໂລ | 100 | 20 | 2 |
| 3 | ເຄືອປ່ານ | ກິໂລ | 1.500 | 100 | 5 |

**ມາດຕາ 10. ການຈັດເກັບຄ່າຊັບພະຍາກອນປ່າໄມ້ ປະເພດເຄື່ອງປ່າຂອງດົງ.**

ປະເພດເຄື່ອງປ່າຂອງດົງທີ່ບໍ່ນອນໃນຕາຕະລາງຂ້າງເທິງ ໃນເວລາປະຕິບັດຕົວຈິງ ຫາກເກີດມີເຄື່ອງປ່າຂອງດົງໃຫ້ເກັບຕາມແຕ່ລະກໍລະນີຄື :

- ສໍາລັບຄ່າຊັບພະຍາກອນປ່າໄມ້ ເຄື່ອງປ່າຂອງດົງປະເພດຄຸ້ມຄອງ ໃຫ້ເກັບສິບສ່ວນຮ້ອຍ (10%) ຂອງມູນຄ່າການຂາຍ;
- ສ່ວນຄ່າຊັບພະຍາກອນ ເຄື່ອງປ່າຂອງດົງປະເພດຫວງຫ້າມ ແລະ ໃກ້ຈະສູນພັນໃຫ້ເກັບ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າຂາຍ;
- ການເກັບອັດຕາຄ່າຊັບພະຍາກອນປ່າໄມ້ ປະເພດເຄື່ອງປ່າຂອງດົງໃຫ້ເກັບໃນເວລາເຄື່ອນຍ້າຍພາຍໃນ ຫຼື ສົ່ງອອກໄປຕ່າງປະເທດ.

## ໝວດທີ 3
## ຂໍ້ຫ້າມ

**ມາດຕາ 11. ສໍາລັບພະນັກງານ**

**ຫ້າມພະນັກງານ ແລະ ເຈົ້າໜ້າທີ່ ຂອງລັດ ມີພຶດຕິກໍາ ດັ່ງນີ້:**

1. ສວຍໃຊ້ໜ້າທີ່ຕໍາແໜ່ງ ແລະ ຮັບສິນບົນເພື່ອຜົນປະໂຫຍດ ໂດຍການກົດໜ່ວງທ່ວງດຶງເອກະສານ ເພື່ອຫາຜົນປະໂຫຍດສ່ວນຕົວ;
2. ໃຊ້ສິດ ໜ້າທີ່ ບັງຄັບນາບຄູ່ເກີນສິດພາລະບົດບາດ ເຊິ່ງກໍ່ຄວາມເສຍຫາຍ ໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດຂອງປະຊາຊົນ;
3. ຫ້າມປອມແປງເອກະສານ, ບັນຊີປະເພດເຄື່ອງປ່າຂອງດົງ, ບັນຊີການຄິດໄລ່ ຄ່າຊັບພະຍາກອນປ່າໄມ້, ຄ່າພັນທະປູກໄມ້ທົດແທນຄືນ, ຄ່າຄຸ້ມຄອງ ແລະ ບັນຊີປະເພດເຄື່ອງປ່າຂອງດົງດໍາເນີນ ຫຼື ເຂົ້າຮ່ວມການດໍາເນີນທຸລະກິດ ກ່ຽວກັບປະເພດເຄື່ອງປ່າຂອງດົງ;
4. ພຶດຕິກໍາອື່ນໆ ທີ່ເປັນຂໍ້ຫ້າມ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 12. ຜູ້ປະກອບການ**

**ຫ້າມຜູ້ປະກອບການ ພາຍໃນ ແລະ ຕ່າງປະເທດ ມີພຶດຕິກໍາ ດັ່ງນີ້:**

1. ດໍາເນີນການສໍາຫຼວດ, ຂຸດຄົ້ນເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຂະແໜງການຂອງລັດ; ສ້າງຕັ້ງໂຮງງານປຸງແຕ່ງ ແລະ ນໍາເຂົ້າວັດຖຸດິບ ແລະ ສົ່ງອອກຜະລິດຕະພັນ ປະເພດເຄື່ອງປ່າຂອງດົງ ໂດຍບໍ່ໄດ້ຮັບອະນຸຍາດ;
2. ເຄື່ອນຍ້າຍ ປະເພດເຄື່ອງປ່າຂອງດົງເກີນນໍ້າໜັກ, ເກີນຈໍານວນ, ເກີນຂະໜາດ ແລະ ໃນເວລາທີ່ເກືອດຫ້າມ ຫຼື ບໍ່ຖືກກັບເອກະສານ;
3. ຊື້ຈ້າງ, ຈອບອອຍ, ນາບຄູ່, ໃຫ້ສິນບົນແກ່ພະນັກງານ, ເຈົ້າໜ້າທີ່ ແລະ ປະຊາຊົນ;
4. ປອມແປງເອກະສານ ທີ່ລັດອະນຸຍາດໃຫ້ດໍາເນີນທຸລະກິດ ປະເພດເຄື່ອງປ່າຂອງດົງ;

5. ພຶດຕິກຳອື່ນໆ ທີ່ເປັນຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 13. ບຸກຄົນ, ນິຕິບຸກຄົນແລະ ການຈັດຕັ້ງທົ່ວໄປ.**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທົ່ວໄປ ມີພຶດຕິກຳ ດັ່ງນີ້:

1. ຮ່ວມມືກັບນັກທຸລະກິດ ພະນັກງານ ຫຼື ເຈົ້າໜ້າທີ່ ຂຸດຄົ້ນ, ເຄື່ອນຍ້າຍ ແລະ ຊື້-ຂາຍ ປະເພດເຄື່ອງປ່າຂອງດົງ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ;

2. ໃຊ້ຄວາມຮຸນແຮງ ແລະ ແອບອ້າງຊື່ຜູ້ອື່ນ ເພື່ອນາບຂູ່ພະນັກງານ, ເຈົ້າໜ້າທີ່ ຫຼື ຜູ້ອື່ນ;

3. ຂັດຂວາງການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່, ກົດໜ່ວງທ່ວງດຶງ ການດຳເນີນຄະດີ ກ່ຽວກັບ ປະເພດເຄື່ອງປ່າຂອງດົງ;

4. ພຶດຕິກຳອື່ນໆ ທີ່ເປັນຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 4
## ອົງການຄຸ້ມຄອງການເກັບ ຄ່າຊົດພະຍາກອນປ່າໄມ້, ຄ່າພັນທະປູກໄມ້ທົດແທນຄືນ ແລະ ຄ່າຄຸ້ມຄອງປະເພດເຄື່ອງປ່າຂອງດົງ

**ມາດຕາ 14. ອົງການຄຸ້ມຄອງ ການເກັບຄ່າຊົດພະຍາກອນປ່າໄມ້, ຄ່າພັນທະປູກໄມ້ທົດແທນຄືນ ແລະ ຄ່າຄຸ້ມຄອງ ປະເພດເຄື່ອງປ່າຂອງດົງ**

ອົງການປົກຄອງແຂວງ ເປັນຜູ້ຄຸ້ມຄອງ ກ່ຽວກັບການເກັບຄ່າຊົດພະຍາກອນປ່າໄມ້, ຄ່າພັນທະປູກໄມ້ ທົດແທນຄືນ ແລະ ຄ່າຄຸ້ມຄອງ ປະເພດເຄື່ອງປ່າຂອງດົງ ຢ່າງລວມສູນເປັນເອກະພາບ ໂດຍມອບຄວາມ ຮັບຜິດຊອບໃຫ້ ພະແນກການທີ່ກ່ຽວຂ້ອງ ເປັນເຈົ້າການປະສານສົມທົບກັນດັ່ງນີ້:

**1. ອົງການຄຸ້ມຄອງ ຂັ້ນແຂວງ ມີ:**

- ພະແນກກະສິກຳ ແລະ ປ່າໄມ້ແຂວງ;
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ;
- ພະແນກການເງິນແຂວງ.

**2. ອົງການຄຸ້ມຄອງ ຂັ້ນເມືອງ ມີ:**

- ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ;
- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ;
- ຫ້ອງການ-ການເງິນເມືອງ.

**ມາດຕາ 15. ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ**

**ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ ກ່ຽວກັບວຽກນີ້ ມີດັ່ງນີ້:**

1. ອອກອະນຸຍາດຂຸດຄົ້ນປະເພດເຄື່ອງປ່າຂອງດົງ ທີ່ໄດ້ຮັບອະນຸມັດໂກຕ້າຈາກລັດຖະບານ;
2. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາການຈັດຕັ້ງປະຕິບັດວຽກງານຂອງຫ້ອງການກະສິກຳ-ປ່າໄມ້ເມືອງ.

**ມາດຕາ 16. ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ**

**ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ ກ່ຽວກັບວຽກນີ້ ມີດັ່ງນີ້:**

1. ເປັນເຈົ້າການຮັບຜິດຊອບເຊັນສັນຍາຊື້-ຂາຍ ປະເພດເຄື່ອງປ່າຂອງດົງທີ່ຂຸດຄົ້ນອອກຈາກທຸກແຫຼ່ງ ຕາມການອະນຸມັດຂອງລັດຖະບານ, ການຊື້-ຂາຍແມ່ນເປີດກວ້າງໃຫ້ກັບບັນດາໂຮງງານ, ບໍລິສັດ ແລະ ຜູ້ປະກອບການທັງພາຍໃນ ແລະຕ່າງປະເທດ ທີ່ມີມາດຖານເງື່ອນໄຂຕາມລະບຽບການທີ່ວາງອອກ;
2. ສັງລວມຂໍ້ມູນປະເພດເຄື່ອງປ່າຂອງດົງ ເພື່ອເປັນຂໍ້ມູນລາຍງານສາຍຕັ້ງ ແລະ ສາຍຂວາງ.

**ມາດຕາ 17. ສິດ ແລະ ໜ້າທີ່ ຂອງພະແນກການເງິນແຂວງ**

**ສິດ ແລະ ໜ້າທີ່ ຂອງພະແນກການເງິນແຂວງ ກ່ຽວກັບວຽກງານນີ້ ມີດັ່ງນີ້:**

1. ພະແນກການເງິນ (ຫ້ອງການຄຸ້ມຄອງຊັບສິນຂອງລັດ) ສັງລວມແຜນໂກຕ່າປະເພດເຄື່ອງປ່າຂອງດົງເພື່ອເປັນພື້ນຖານຂໍ້ມູນການເກັບລາຍຮັບຈາກເຄື່ອງປ່າຂອງດົງ;
2. ເຄື່ອງປ່າຂອງດົງທຸກຊະນິດ ທີ່ຂຸດຄົ້ນຕາມການອະນຸມັດ ພາຍຫຼັງທີ່ພະແນກ ອຸດສາຫະກໍາ ແລະການຄ້າ ໄດ້ເຊັນສັນຍາຊື້-ຂາຍ ຕ້ອງນໍາມາຈົດທະບຽນ ແລະ ວາງເງິນຄໍ້າປະກັນສັນຍາຢູ່ພະແນກການເງິນ (ຫ້ອງການຄຸ້ມຄອງຊັບສິນຂອງລັດ).

   ພາຍຫຼັງຊໍາລະສະສາງຄ່າຊັບພະຍາກອນເຄື່ອງປ່າຂອງດົງຕາມສັນຍາຊື້-ຂາຍແລ້ວ ພະແນກການເງິນ (ຫ້ອງການຄຸ້ມຄອງຊັບສິນຂອງລັດ) ຕ້ອງສະຫຼຸບປະຈໍາປີ ໂດຍສົມທົບກັບພະແນກກ່ຽວຂ້ອງເພື່ອໄລ່ລຽງຄືນຕາມຈໍານວນບໍລິມາດຕົວຈິງທີ່ໄດ້ຂຸດຄົ້ນ.

**ມາດຕາ 18. ສິດ ແລະ ໜ້າທີ່ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ**

**ສິດ ແລະ ໜ້າທີ່ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ກ່ຽວກັບວຽກງານນີ້ ມີດັ່ງນີ້:**

1. ຂຶ້ນບັນຊີ, ຕິດຕາມ, ກວດກາ, ຕິດຊັ່ງ, ຢັ້ງຢືນ ປະເພດເຄື່ອງປ່າຂອງດົງ ຢູ່ພາຍໃນເມືອງ;
2. ສະຫຼຸບ-ລາຍງານຜົນການຈັດຕັ້ງປະຕິບັດ ປະເພດເຄື່ອງປ່າຂອງດົງຕາມລະບຽບການ.

**ມາດຕາ 19. ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ.**

**ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງກ່ຽວກັບວຽກງານນີ້ ມີດັ່ງນີ້ :**

1. ຕິດຕາມ, ກວດກາ, ຕິດຊັ່ງ, ສ້າງບົດບັນທຶກຢັ້ງຢືນ ປະເພດເຄື່ອງປ່າຂອງດົງ ຢູ່ພາຍໃນເມືອງ;
2. ສະຫຼຸບ-ລາຍງານການຈັດຕັ້ງປະຕິບັດການຊື້-ຂາຍ ເຄື່ອງປ່າຂອງດົງ ໃຫ້ພະແນກ ຮັບຊາບ.

**ມາດຕາ 20. ສິດ ແລະ ໜ້າທີ່ ຂອງຫ້ອງການ-ການເງິນເມືອງ**

**ສິດ ແລະ ໜ້າທີ່ ຂອງຫ້ອງການ-ການເງິນເມືອງ ກ່ຽວກັບວຽກງານນີ້ ມີດັ່ງນີ້ :**

1. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການເກັບຄ່າຊັບພະຍາກອນເຄື່ອງປ່າຂອງດົງຕາມສັນຍາຊື້-ຂາຍຂອງພະແນກອຸດສາຫະກໍາ ແລະ ການຄ້າ;
2. ສະຫຼຸບ-ລາຍງານຜົນ ຂອງການຈັດຕັ້ງປະຕິບັດ ການເກັບຄ່າຊັບພະຍາກອນ ປະເພດເຄື່ອງປ່າຂອງດົງໃຫ້ພະແນກ ຮັບຊາບເປັນປົກກະຕິ.

## ໝວດທີ 5

## ອົງການກວດກາການປະຕິບັດ ການເກັບຄ່າຊັບພະຍາກອນປ່າໄມ້, ຄ່າພັນທະປູກປ່າທົດແທນຄືນ ແລະ ຄ່າຄຸ້ມຄອງ ປະເພດເຄື່ອງປ່າຂອງດົງ

**ມາດຕາ 21.  ອົງການກວດກາ**

ອົງການກວດກາປະກອບດ້ວຍ 2 ພາກສ່ວນ ຄື: ແມ່ນອົງການທີ່ໄດ້ກຳນົດໃນມາດຕາທີ່ 14 ຂອງຂໍ້ຕົກລົງສະບັບນີ້.

1. ການກວດກາພາຍໃນເຊິ່ງປະກອບມີ ພະແນກກະສິກຳ ແລະ ປ່າໄມ້, ພະແນກອຸດສາຫະກຳ ແລະ ການຄ້າ ແລະ ພະແນກການເງິນ;

2. ການກວດກາພາຍນອກປະກອບດ້ວຍ ສະພາປະຊາຊົນແຂວງ, ອົງການກວດສອບປະຈຳພາກອົງການກວດກາລັດແຂວງ ແລະ ອົງການຈັດຕັ້ງມະຫາຊົນ ຕະຫຼອດຮອດປະຊາຊົນ.

**ມາດຕາ 22.  ເນື້ອໃນ ແລະ ຮູບການກວດກາ.**

**ເນື້ອໃນການກວດກາ :**

ກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງພະນັກງານ,  ກ່ຽວກັບການເກັບຄ່າຊົບພະຍາກອນປ່າໄມ້, ຄ່າພັນທະປູກໄມ້ທົດແທນຄືນ ແລະ ຄ່າຄຸ້ມຄອງ ປະເພດເຄື່ອງປ່າຂອງດົງ.

**ຮູບການການກວດກາ :**

1. ກວດກາປົກກະຕິ: ແມ່ນການກວດກາຕາມແຜນການທີ່ວາງໄວ້ແຕ່ລະໄລຍະ.
2. ແຈ້ງໃຫ້ຮູ້ລ່ວງໜ້າ: ແມ່ນເປັນນິຕິກຳທີ່ແຈ້ງບອກລ່ວງໜ້າໃຫ້ເປົ້າໝາຍຮັບຮູ້ກ່ອນຢ່າງເປັນລາຍລັກອັກສອນ.
3. ບໍ່ແຈ້ງໃຫ້ຮູ້ລ່ວງໜ້າ: ແມ່ນກວດກາຕາມແຫຼ່ງຂ່າວຈາກພົນລະເມືອງດີ ຫຼື ກວດກາແບບກະທັນຫັນຕາມເປົ້າໝາຍສະເພາະ.

## ໝວດທີ 6

## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 23. ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ລວມເຖິງພະນັກງານ ແລະ ເຈົ້າໜ້າທີ່ຂອງລັດ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຖືກຕ້ອງຕາມລະບຽບກົດໝາຍ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕາມລະບຽບການ.

**ມາດຕາ 24.  ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດລວມເຖິງພະນັກງານ ແລະ ເຈົ້າໜ້າທີ່ຂອງລັດ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ ຫຼື ລົງໂທດຕາມກົດໝາຍແລ້ວແຕ່ກໍລະນີເບົາ ຫຼື ໜັກ.

**ມາດຕາ 25. ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດລວມເຖິງພະນັກງານ ແລະ ເຈົ້າໜ້າທີ່ຂອງລັດ ທີ່ໄດ້ລະເມີດ ຂໍ້ຕົກລົງສະບັບນີ້ ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ມີຄວາມຈິງໃຈລາຍງານ ກໍຈະຖືກຕັກເຕືອນ ແລະ ສຶກສາອົບຮົມ.

**ມາດຕາ 26.** ມາດຕະການທາງວິໄນ

ພະນັກງານ ແລະ ເຈົ້າໜ້າທີ່ ທີ່ໄດ້ລະເມີດ ຂໍ້ຕົກລົງສະບັບນີ້ ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກຕິຕຽນ, ກ່າວເຕືອນຄວາມຜິດ; ກໍລະນີບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກຈາກຄວາມຜິດຂອງຕົນ ຈະຖືກໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ, ການຍ້ອງຍໍ ຫຼື ປົດຕຳແໜ່ງ, ຍົກຍ້າຍໄປຮັບໜ້າທີ່ອື່ນຕ່ຳກວ່າເກົ່າ, ໃຫ້ອອກຈາກລັດຖະກອນ ແລະ ຜູ້ທີ່ຖືກປະຕິບັດວິໄນ ຕ້ອງສົ່ງຊັບສິນ ທີ່ຕົນໄດ້ມາໂດຍບໍ່ຖືກຕ້ອງນັ້ນຄືນ ໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

**ມາດຕາ 27.** ມາດຕະການ ປັບໃໝ

ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ລວມເຖິງພະນັກງານ ແລະ ເຈົ້າໜ້າທີ່ຂອງລັດ ທີ່ໄດ້ລະເມີດ ຂໍ້ຕົກລົງສະບັບນີ້ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍກ່ຽວກັບປະເພດ ເຄື່ອງປ່າຂອງດົງ ໂດຍໄດ້ຖືກການກ່າວເຕືອນ ແລະ ສຶກສາອົບຮົມມາກ່ອນແລ້ວ ແມ່ນຈະຖືກປັບໃໝຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 125 ຂອງກົດໝາຍ ວ່າດ້ວຍປ່າໄມ້.

**ມາດຕາ 28.** ມາດຕະການ ທາງແພ່ງ

ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ລວມເຖິງພະນັກງານ ແລະ ເຈົ້າໜ້າທີ່ຂອງລັດ ທີ່ໄດ້ລະເມີດ ຂໍ້ຕົກລົງສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍກ່ຽວກັບປະເພດເຄື່ອງປ່າຂອງດົງ ທີ່ເປັນຜົນປະໂຫຍດຂອງລັດ, ຄອບຄົວ ແລະ ບຸກຄົນອື່ນ ເນື່ອງຈາກການກະທຳທີ່ບໍ່ຖືກຕ້ອງ ແມ່ນຈະຕ້ອງໃຊ້ແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ ແລະ ຊັບສິນທີ່ໄດ້ມາຈາກການກະທຳຜິດຈະຖືກຮິບເປັນຂອງລັດທັງໝົດ.

**ມາດຕາ 29.** ມາດຕະການ ທາງອາຍາ

ບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດລວມເຖິງພະນັກງານ ແລະ ເຈົ້າໜ້າທີ່ຂອງລັດ ທີ່ໄດ້ລະເມີດ ຂໍ້ຕົກລົງສະບັບນີ້ ຊຶ່ງເປັນການກະທຳໂດຍບໍ່ໄດ້ຮັບອະນຸຍາດ ແລະ ຜິດຕໍ່ລະບຽບກົດໝາຍວ່າດ້ວຍປ່າໄມ້ ກໍ່ຄວາມເສຍຫາຍ ຕໍ່ເຄື່ອງປ່າຂອງດົງ ຈະຖືກດຳເນີນຄະດີອາຍາ ຕາມປະມວນກົດໝາຍອາຍາ.

**ມາດຕາ 30.** ມາດຕະການ ໂທດເພີ່ມ

ນອກຈາກໂທດຕົ້ນຕໍ ທີ່ໄດ້ກ່າວໄວ້ແລ້ວ ຜູ້ກະທຳຜິດຈະຖືກປະຕິບັດໂທດເພີ່ມໃນການຮິບຊັບ, ພາຫະນະອຸປະກອນ ທີ່ພົວພັນກັບການກະທຳຜິດ ເປັນຂອງລັດ ແລະ ອາດຈະຖືກໂຈະ ຫຼື ຖອນໃບອະນຸຍາດຂຸດຄົ້ນ ແລະ ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບປະເພດເຄື່ອງປ່າຂອງດົງ.

## ໝວດທີ 7

## ບົດບັນຍັດສຸດທ້າຍ

**ມາດຕາ 31.** ການຈັດຕັ້ງປະຕິບັດ

ອົງການປົກຄອງແຂວງ, ພະແນກກະສິກຳ ແລະ ປ່າໄມ້, ພະແນກອຸດສາຫະກຳ ແລະ ການຄ້າ, ພະແນກການເງິນຂັ້ນແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້, ຫ້ອງການອຸດສາຫະກຳ ແລະ ການຄ້າ, ຫ້ອງການ-ການເງິນຂັ້ນເມືອງ ແລະ ຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ ຈົ່ງພ້ອມກັນຈັດຕັ້ງຜັນຂະຫຍາຍ, ເຊື່ອມຊຶມ ແລະ ປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 32. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ວັນທ່ານເຈົ້າແຂວງລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງ 293/ຂບຊ, 294/ຂບຊ ລົງວັນທີ 27 ພຶດສະພາ 2014 ແລະ ເລກທີ 521/ຂບຊ ລົງວັນທີ 12 ສິງຫາ 2015 ແລະ ແຈ້ງການຂອງຫ້ອງວ່າການປົກຄອງແຂວງສະບັບເລກທີ 059/ຫປຂ.ບຊ ລົງວັນທີ 25 ກຸມພາ 2011. ສໍາລັບ ຂໍ້ຕົກລົງ, ແຈ້ງການ ໃດທີ່ຂັດກັບຂໍ້ຕົກລົງສະບັບນີ້ ແມ່ນຖືກຍົກເລີກ.

**ເຈົ້າແຂວງບໍລິຄໍາໄຊ**

ປອ. ກອງແກ້ວ ໄຊສົງຄາມ